ທຶນສະໜັບສະໜຸນການຮ່ວມມືພາຍໃຕ້ MNET-CTC

ໂຄງການເຄືອຂ່າຍແມ່ນ້ຳຂອງເພື່ອຕ້ານອາຊະຍາກຳຂ້າມຊາດ (MNET-CTC) ກຳລັງເຮັດວຽກຢ່າງໃກ້ຊິດກັບພາກອົງການຈັດຕັ້ງທາງສັງຄົມ ເຊັ່ນ: ອົງການຈັດຕັ້ງທີ່ບໍ່ສັງກັດລັດ (NGO), ນັກຂ່າວ ແລະ ນັກວິຊາການ ເຊິ່ງມັກຈະເປັນກຳລັງແຖວໜ້າ ແລະ ເປັນກຸ່ມທຳອິດທີ່ໄດ້ຮັບມື ແລະ ຕອບໂຕ້ຕໍ່ອາຊະຍາກຳທີ່ມີການຈັດຕັ້ງ. ເພື່ອເສີມສ້າງຄວາມສາມາດໃນການຢືດຢຸ່ນ ແລະ ຮັບມືຂອງຊຸມຊົນທີ່ໄດ້ຮັບຜົນກະທົບຈາກອາຊະຍາກຳ, MNET-CTC ຈຶ່ງຂໍເຊີນຊວນໃຫ້ອົງການຈັດຕັ້ງເຫຼົ່ານີ້ສະເໜີໂຄງການຮ່ວມມື ເພື່ອຮັບມື ແລະ ສະກັດກັ້ນບັນຫາຢາເສບຕິດທີ່ຜິດກົດໝາຍ, ອາຊະຍາກຳທາງດ້ານການເງິນ ແລະ ການຊຸດຮີດ/ສະແຫວງຫາຜົນປະໂຫຍດທາງເພດຈາກເດັກນ້ອຍ.

ທຶນສະໜັບສະໜຸນການຮ່ວມມືນີ້, ເປັນໂອກາດພິເສດສຳລັບບັນດາອົງການຈັດຕັ້ງທາງສັງຄົມ ໃນການຮ່ວມກັນຕ້ານອາຊະຍາກຳ ໃນຖານະທີ່ເປັນສ່ວນໜຶ່ງຂອງ ເຄືອຂ່າຍຊຸມຊົນແຫ່ງການຮຽນຮູ້ ແລະ ການປະຕິບັດ (Community of Practice) ຂອງ MNET-CTC. ທຶນດັ່ງກ່າວຕັ້ງຢູ່ບົນພື້ນຖານແນວຄວາມຄິດທີ່ວ່າ ການຮ່ວມມືລະຫວ່າງຜູ້ຄົນທີ່ເພີ່ມຂຶ້ນ ຈະຊ່ວຍໃຫ້ການລິເລີ່ມຂອງຊຸມຊົນມີຄວາມເຂັ້ມແຂງ ແລະ ສາມາດຮັບມືກັບສິ່ງທ້າທາຍໄດ້ດີຂຶ້ນ. ນອກຈາກນັ້ນ, ຜົນສຳເລັດຂອງການດຳເນີນງານຍັງຈະມີຄວາມຍືນຍົງ ແລະ ມີປະສິດທິຜົນຫຼາຍຂຶ້ນ ເມື່ອຫຼາຍພາກສ່ວນໄດ້ມີໂອກາດຮ່ວມມື ແລະ ແລກປ່ຽນບົດຮຽນເຊິ່ງກັນ ແລະ ກັນ, ພັດທະນາທັກສະໃໝ່ ແລະ ເຊື່ອມໂຍງປະສົບການຂອງພວກເຂົາໄປທົ່ວພາກພື້ນ.

ໂຄງການທຶນສະໜັບສະໜຸນເພື່ອສົ່ງເສີມການຮ່ວມມື ຈະຖືກອອກແບບ ແລະ ຈັດຕັ້ງປະຕິບັດໂດຍອົງການຈັດຕັ້ງທາງສັງຄົມ ເຊິ່ງອົງການ Global Initiative Against Transnational Organized Crime (GI-TOC) ຈະຄ່ອຍໃຫ້ການສະໜັບສະໜຸນ ແລະ ຕິດຕາມ. ວິທີການນີ້ຊ່ວຍໃຫ້ໝັ້ນໃຈວ່າ ໂຄງການຕ່າງໆສາມາດຕອບສະໜອງຕໍ່ຄວາມຕ້ອງການ ແລະ ປັບຕົວໃຫ້ເໝາະສົມກັບສະພາບຂອງຊຸມຊົນໃນທ້ອງຖິ່ນ ພ້ອມທັງສາມາດນຳເອົາບົດຮຽນ ແລະ ແນວທາງການປະຕິບັດທີ່ດີຈາກການຮ່ວມມືໃນລະດັບພາກພື້ນ ແລະ ລະດັບສາກົນມາປັບໃຊ້.

ສິ່ງທີ່ທຶນສະໜັບສະໜຸນການຮ່ວມມືພາຍໃຕ້ MNET-CTC ມອບໃຫ້:

- ຍົກລະດັບຄວາມສາມາດໃນການປັບຕົວ ແລະ ຮັບມືກັບອາຊະຍາກຳທີ່ມີການຈັດຕັ້ງໃນລະດັບຊຸມຊົນ
- ການພັດທະນາທາງດ້ານຂີດຄວາມສາມາດສຳລັບອົງການ ແລະ ຄູ່ຮ່ວມງານ
- ການເຂົ້າເປັນສະມາຊິກເຄືອຂ່າຍ: ໄດ້ເຂົ້າເປັນສະມາຊິກຂອງ GI-TOC Resilience Fund Community ແລະ ເຄືອຂ່າຍອື່ນໆຂອງ GI-TOC ໃນວົງກວ້າງ ເຊິ່ງຈະເປີດໂອກາດໃຫ້ເຂົ້າເຖິງການຮຽນຮູ້, ການຮ່ວມມື ແລະ ໂອກາດຂໍທຶນໃນອະນາຄົດ ຕາມຄວາມເໝາະສົມ.
- ໂອກາດເຂົ້າຮ່ວມກິດຈະກຳເພີ່ມເຕີມ: ເຊັ່ນ: ການຝຶກອົບຮົມ, ເວທີສົນທະນາການພັດທະນາ (Development Dialogues) ແລະ ເວທີສົນທະນາກ່ຽວກັບການເສີມສ້າງຄວາມຢືດຢຸ່ນ (Resilience Dialogues) ຂອງ MNET-CTC ຕາມກາລະໂອກາດ ແລະ ຄວາມເໝາະສົມ.

ເປົ້າໝາຍຂອງພວກເຮົາ

ພວກເຮົາມຸ່ງໝາຍໃຫ້ຜູ້ທີ່ມີສ່ວນກ່ຽວຂ້ອງຫຼັກຈາກຂະແໜງການຕ່າງໆ ແລະ ໃນທຸກລະດັບຂອງສັງຄົມໃນອະນຸພາກພື້ນແມ່ນ້ຳຂອງ ມີຂໍ້ມູນ ແລະ ຫຼັກຖານທີ່ໜ້າເຊື່ອຖື, ມີຂີດຄວາມສາມາດ ແລະ ມີເຄືອຂ່າຍຄວາມສຳພັນທີ່ເຂັ້ມແຂງ ເພື່ອສາມາດມີສ່ວນຮ່ວມໃນການກຳນົດ ແລະ ໃຫ້ຂໍ້ມູນປະກອບແກ່ນະໂຍບາຍ ແລະ ແນວທາງການປະຕິບັດ ໃນການຕ້ານອາຊະຍາກຳທີ່ມີການຈັດຕັ້ງຂ້າມຊາດ.

ລາຍລະອຽດຂອງກິດຈະກຳ

ພວກເຮົາກຳລັງຊອກຫາບົດສະເໜີໂຄງການຮ່ວມມືທີ່ເນັ້ນການມີສ່ວນຮ່ວມຂອງຊຸມຊົນ ເພື່ອຮັບມືກັບຜົນກະທົບຂອງອາຊະຍາກຳທີ່ມີການຈັດຕັ້ງທີ່ເກີດຂຶ້ນໃນທ້ອງຖິ່ນ. ກິດຈະກຳທີ່ສະເໜີຄວນຕອບສະໜອງຕໍ່ອາຊະຍາກຳທີ່ມີການຈັດຕັ້ງປະເພດໃດໜຶ່ງ ຫຼື ຫຼາຍປະເພດຈາກ 3 ປະເພດຕໍ່ໄປນີ້ ລວມທັງປັດໄຈຂັບເຄື່ອນ ແລະ ປັດໄຈເອື້ອອຳນວຍທີ່ກ່ຽວຂ້ອງກັບອາຊະຍາກຳເຫຼົ່ານັ້ນ:

- ບັນຫາຢາເສບຕິດທີ່ຜິດກົດໝາຍ
- ອາຊະຍາກຳທາງດ້ານການເງິນ
- ການຊູດຣິດ/ສະແຫວງຫາຜົນປະໂຫຍດທາງເພດຈາກເດັກນ້ອຍ.

ກິດຈະກຳທີ່ສະເໜີສາມາດເປັນຮູບແບບໃດກໍໄດ້ ແຕ່ຕ້ອງສາມາດສ້າງຜົນໄດ້ຮັບທີ່ສອດຄ່ອງກັບເປົ້າໝາຍຂອງພວກເຮົາ. ກິດຈະກຳຄວນຍຶດຖືແນວທາງການເສີມສ້າງຄວາມຢືດຢຸ່ນຂອງຊຸມຊົນໃນການຮັບມືກັບອາຊະຍາກຳທີ່ມີການຈັດຕັ້ງ. ໝາຍຄວາມວ່າ ໂຄງການຕ້ອງສະແດງໃຫ້ເຫັນຄວາມເຊື່ອມໂຍງຢ່າງຊັດເຈນລະຫວ່າງ ການກະທຳຜິດທາງອາຍາ; ຜົນກະທົບທີ່ເປັນໂທດຕໍ່ຊຸມຊົນໃນລະດັບທ້ອງຖິ່ນ; ແລະ ກົນໄກ ຫຼື ມາດຕະການທີ່ສາມາດນຳໃຊ້ເພື່ອຕ້ານທານ, ປັບຕົວ ແລະ ສະກັດກັ້ນລະບົບອາຊະຍາກຳທີ່ມີການຈັດຕັ້ງ.

MNET-CTC ຍິນດີຮັບບົດສະເໜີຈາກອົງການຕ່າງໆໃນປະເທດກຳປູເຈຍ, ລາວ, ມຽນມາ[1], ໄທ ແລະ ຫວຽດນາມ ສຳລັບໂຄງການທີ່ມີຄວາມຄິດລິເລີ່ມໃໝ່ ແລະ ຕ້ອງອາໄສການຮ່ວມມືລະຫວ່າງສອງ ຫຼື ສາມອົງການ. ບົດສະເໜີໂຄງການຮ່ວມມືລະຫວ່າງອົງການທີ່ຕັ້ງຢູ່ຄົນລະປະເທດພາຍໃນອະນຸພາກພື້ນແມ່ນ້ຳຂອງ ຈະໄດ້ຮັບການພິຈາລະນາເປັນບູລິມະສິດ.

ກຸ່ມເປົ້າໝາຍທີ່ສາມາດສະໝັກຂໍທຶນຮ່ວມມືໄດ້:

- ອົງການຈັດຕັ້ງທີ່ຕັ້ງຢູ່ໃນຊຸມຊົນ (Community-based organizations)
- ອົງການບໍ່ຫວັງຜົນກຳໄລ ແລະ ອົງການທີ່ບໍ່ສັງກັດລັດຖະບານ (Non-profit and non-governmental organizations)
- ອົງການສື່ມວນຊົນ (Media organizations)
- ອົງການທີ່ເຮັດວຽກກ່ຽວກັບແມ່ຍິງ ແລະ ໄວໜຸ່ມ (Women and youth organizations)
- ອົງການທີ່ຕັ້ງຢູ່ບົນພື້ນຖານສາສະໜາ (Faith-based organizations)
- ອົງການປະເພດອື່ນໆກໍອາດຈະໄດ້ຮັບການພິຈາລະນາເຊັ່ນກັນ — ກະລຸນາສຶກສາລາຍລະອຽດເພີ່ມເຕີມໃນຄູ່ມືແນະນຳການສະໝັກຂໍທຶນ (Grant Opportunity Guidelines).

[1] Myanmar engagement will be reviewed on a case-by-case basis, should operating context allow.

ການຮ່ວມມື

ພວກເຮົາເຊີນຊວນໃຫ້ອົງການຕ່າງໆສົ່ງແບບຟອມສະໝັກຂໍທຶນຮ່ວມກັນ ເພື່ອຮ່ວມກັນຈັດຕັ້ງປະຕິບັດບັນດາກິດຈະກຳທີ່ໄດ້ຮັບທຶນສະໜັບສະໜູນ. ພ້ອມກັນນັ້ນ, ການສະໝັກຂໍທຶນແບບອົງການດ່ຽວທີ່ມີຄວາມເຂັ້ມແຂງ ແລະ ສະເໜີແນວທາງອື່ນໆໃນການສ້າງຄວາມຮ່ວມມື ກໍຈະໄດ້ຮັບການພິຈາລະນາເຊັ່ນກັນ ໂດຍຂຶ້ນກັບງົບປະມານທຶນທີ່ມີຢູ່.

ການສື່ອແບບຟອມສະໝັກຂໍທຶນຮ່ວມກັນ ຄວນກຳນົດໃຫ້ມີອົງການໃດໜຶ່ງເປັນອົງການນຳ (Lead Organization) ເພື່ອເປັນຜູ້ຍື່ນຂໍ້ສະເໜີໂຄງການ ພ້ອມທັງກຳນົດ ແລະ ອະທິບາຍບົດບາດຂອງອົງການຮ່ວມມືແຕ່ລະອົງການໃຫ້ຊັດເຈນ. ຕ້ອງລະບຸລາຍຊື່ອົງການທັງໝົດທີ່ຈະເຂົ້າຮ່ວມດຳເນີນໂຄງການ ແລະ ອົງການຮ່ວມມືແຕ່ລະອົງການຕ້ອງຍື່ນໜັງສືສະແດງການສະໜັບສະໜູນ (Letter of Support).

ບົດບາດ ແລະ ຄວາມຮັບຜິດຊອບຂອງອົງການຮ່ວມມືແຕ່ລະອົງການ ຕ້ອງໄດ້ກຳນົດໃຫ້ຊັດເຈນ. ອົງການນຳມີໜ້າທີ່ຮັບຜິດຊອບໃນການຍື່ນຄຳຮ້ອງຂໍທຶນ. ນອກຈາກນັ້ນ, ອົງການຮ່ວມມືທຸກຝ່າຍຕ້ອງຕົກລົງຮ່ວມກັນກ່ຽວກັບການແບ່ງໜ້າວຽກ ລວມທັງວິທີການຈັດສັນ ແລະ ໂອນງົບປະມານທຶນລະຫວ່າງອົງການຮ່ວມມື.

ງົບປະມານ ແລະ ໄລຍະເວລາດຳເນີນໂຄງການ

- ທຶນສະໜັບສະໜູນສ່ວນໃຫຍ່ຈະຢູ່ໃນລະຫວ່າງ AUD 30 000 – AUD 65 000
- ໄລຍະເວລາດຳເນີນໂຄງການແມ່ນ ແຕ່ວັນທີ 15 ກຸມພາ 2027 ຫາ 15 ກຸມພາ 2028

ຜູ້ສະໝັກທີ່ໄດ້ຄະແນນສູງໃນແບບສອບຖາມກ່ອນການສະໝັກ (Pre-application Questionnaire) ຈະໄດ້ຮັບເຊີນໃຫ້ຍື່ນຄຳຂໍງົບປະມານ ເຊິ່ງເປັນສ່ວນໜຶ່ງຂອງໃບສະໝັກສະບັບເຕັມ. ຜູ້ສະໝັກຄວນພິຈາລະນາໄລຍະເວລາ ແລະ ລະດັບຄວາມສັບຊ້ອນຂອງກິດຈະກຳທີ່ສະເໜີ ໃນການຄິດໄລ່ແຜນຄາດກະງົບປະມານ ແລະ ເອກະສານປະກອບການສະໝັກອື່ນໆ.

ຂັ້ນຕອນການສະໝັກຂໍທຶນ

ການສະໝັກຂໍທຶນມີຂັ້ນຕອນດັ່ງນີ້:

1) ກອກແບບສອບຖາມກ່ອນການສະໝັກ (Pre-application Questionnaire) ໃຫ້ຄົບຖ້ວນ https://globalinitiative.net/wp-content/uploads/2025/10/Lao-2.1-Pre-Application-Questionnaire-Format-1_2026.docx
2) ຖ້າຜ່ານເຂົ້າຮອບຕໍ່ໄປ, ໃຫ້ດຳເນີນການຍື່ນບົດສະເໜີໂຄງການສະບັບເຕັມ (Full Proposal Application) ພ້ອມທັງແຜນງົບປະມານອີງຕາມກິດຈະກຳ (Activity-based Budget).

ຜູ້ສະໝັກຕ້ອງສົ່ງແບບສອບຖາມກ່ອນການສະໝັກພາຍໃນໄລຍະເວລາທີ່ກຳນົດຕາມທີ່ປະກາດໄວ້. ຈະບໍ່ຮັບພິຈາລະນາເອກະສານຂໍທຶນທີ່ຍື່ນຫຼັງເວລາທີ່ກຳນົດ.

ຜູ້ສະໝັກສາມາດຍື່ນໃບສະໝັກ ຫຼື ແບຟອມເປັນພາສາອັງກິດ ຫຼື ໜຶ່ງໃນພາສາຫຼັກຂອງອະນຸພາກພື້ນແມ້ໍາຂອງ ໄດ້ແກ່ພາສາຂະແມ , ພາສາລາວ,ພາສາໄທ ຫຼື ພາສາຫວຽດນາມ. ເອກະສານປະກອບການສະໝັກໃນພາສາເຫຼົ່ານີ້ສາມາດຄົ້ນຫາໄດ້ທີ [ໃສ່ໆ].

ຖ້າທ່ານໄດ້ຮັບການຄັດເລືອກ, ພວກເຮົາຄາດຫວັງວ່າທ່ານຈະສາມາດເລີ່ມດຳເນີນກິດຈະກຳພາຍໃຕ້ທຶນສະໜັບສະໜູນໄດ້ໃນເດືອນກຸມພາ 2027.

ກຳນົດເວລາສຳລັບການຂໍທຶນ	
ໄລຍະເປີດຮັບສະໝັກຂໍທຶນ:	ວັນທີ 1 ພະຈິກ 2026 – 7 ທັນວາ 2026, ເວລາ 23:59 ໂມງ (CEST)
ໄລຍະການປະເມີນຄຳຮ້ອງ:	ວັນທີ 1 ທັນວາ 2026 – 15 ມັງກອນ 2027
ໄລຍະການດຳເນີນໂຄງການ:	ເດືອນກຸມພາ 2027 – ເດືອນກຸມພາ 2028

ຂໍ້ມູນຕິດຕໍ່ແລະການຍື່ນຄຳຮ້ອງຂໍທຶນ

ພວກເຮົາຂໍແນະນຳໃຫ້ ໜ່ອ່ານຄູ່ມືແນະນຳການສະໝັກຂໍທຶນສະບັບເຕັມໄດ້ ໃ ທີ່ລິ ຂອງພວກເຮົາ: https://globalinitiative.net/wp-content/uploads/2025/10/Lao-1-Grants-Opportunities-Guidelines_short-DFAT-edits_2026.pdf

ຫາກທ່ານມີຄຳຖາມໃດໆ ກະລຸນາຕິດຕໍ່: mnet-ctc-resilience@globalinitiative.net

ກະລຸນາສົ່ງແບບສອບຖາມກ່ອນການສະໝັກ ໄປທີ່ mnet-ctc-resilience@globalinitiative.net ພາຍໃນວັນທີ 30 ພະຈິກ 2026, ເວລາ 23:59 ໂມງ (CEST)

ກ່ຽວກັບMNET-CTC

ໂຄງການເຄືອຂ່າຍແມ່ນ້ຳຂອງເພື່ອຕ້ານອາຊະຍາກຳຂ້າມຊາດ (MNET-CTC) ເປັນໂຄງການຫຼາຍປີ ທີ່ຈັດຕັ້ງປະຕິບັດໂດຍອົງການ Global Initiative Against Transnational Organized Crime (GI-TOC) ຮ່ວມກັບລັດຖະບານປະເທດອິດສະຕຣາລີ. MNET-CTC ໃຫ້ຄວາມສຳຄັນຕໍ່ຜົນກະທົບອັນສຳຄັນຂອງຂໍ້ມູນ ແລະ ການວິເຄາະ ໂດຍມຸ່ງໝັ້ນເສີມສ້າງພື້ນຖານຫຼັກຖານກ່ຽວກັບແນວໂນ້ມຂອງອາຊະຍາຂ້າມຊາດທີ່ມີການຈັດຕັ້ງ ພ້ອມທັງສ້າງຄວາມຮັບຮູ້ກ່ຽວກັບຜົນກະທົບຂອງຕະຫຼາດຜິດກົດໝາຍໃນປະເທດກຳປູເຈຍ, ລາວ, ມຽນມາ, ໄທ ແລະ ຫວຽດນາມ. MNET-CTC ສ້າງຊ່ອງທາງໃນການແລກປ່ຽນຄວາມຮູ້ດັ່ງກ່າວກັບພາກສ່ວນທີ່ກ່ຽວຂ້ອງໃນລະດັບທ້ອງຖິ່ນ ແລະ ພາກພື້ນ, ພາກລັດ ແລະ ພາກເອກະຊົນ. ພ້ອມກັນນີ້, ໂຄງການຍັງມຸ້ງສ້າງເຄືອຂ່າຍຊຸມຊົນແຫ່ງການຮຽນຮູ້ ແລະ ແລກປ່ຽນປະສົບການໃນລະດັບພາກພື້ນ ເພື່ອຮ່ວມກັນເສີມສ້າງຄວາມຍືດຢຸ່ນໃນການຮັບມືກັບອາຊະຍາກຳເຫຼົ່ານີ້.